THE COMMONWEALTH OF MASSACHUSETTS
EXECUTIVE OFFICE OF LABOR AND WORKFORCE DEVELOPMENT
DEPARTMENT OF UNEMPLOYMENT ASSISTANCE

# ຂໍ້ມູນກ່ຽວກັບການຄຸ້ມຄອງປະກັນໄພຫວ່າງງານຂອງພະນັກງານ

ຊື່ນາຍຈ້າງ ______________________ ເລກປະຈຳຕົວຂອງນາຍຈ້າງທີ່ພະແໜກ DUA # ______________

ທີ່ຢູ່ ______________________

ພະນັກງານຂອງທຸລະກິດ ຫຼືອົງການຈັດຕັ້ງນີ້ ແມ່ນຖືກຄຸ້ມຄອງໂດຍປະກັນໄພຫວ່າງງານ (UI), ຊຶ່ງເປັນໂຄງການທີ່ໄດ້ທຶນທັງຫມົດຈາກບັນດານາຍຈ້າງ ໃນລັດ Massachusetts. ບໍ່ມີການຫັກຈາກເງິນເດືອນຂອງທ່ານເພື່ອຈ່າຍຄ່າໃຊ້ຈ່າຍເງິນຜົນປະໂຫຍດປະກັນໄພຫວ່າງງານຂອງທ່ານ.

ຖ້າຫາກທ່ານໄດ້ເສຍວຽກເຮັດງານທຳຂອງທ່ານ, ທ່ານອາດຈະມີສິດທີ່ຈະໄດ້ຮັບເງິນປະກັນໄພຫວ່າງງານ. ຂັ້ນຕອນລຸ່ມນີ້ແມ່ນຂໍ້ມູນທີ່ທ່ານຕ້ອງການເພື່ອຈະຍື່ນຄຳຮ້ອງຂໍເອົາເງິນຜົນປະໂຫຍດປະກັນໄພຫວ່າງງານ. ກ່ອນທີ່ຈະຍື່ນ, ນາຍຈ້າງຂອງທ່ານຈະເອົາສຳເນົາປື້ມແນະນຳໃຫ້ທ່ານ: ວິທີການຂໍເອົາເງິນ ຜົນປະໂຫຍດປະກັນໄພຫວ່າງງານ, ສະຫນອງໃຫ້ໂດຍລັດ Massachusetts, ພະແນກຊ່ວຍເຫຼືອການຫວ່າງງານ (DUA).

**ທ່ານຕ້ອງຢູ່ໃນສະຫະລັດ, ເຂດດິນແດນຂອງສະຫະລັດ ຫຼື ການາດາ ໃນເວລາຍື່ນການຮ້ອງຂໍເງິນ ຫຼືຢັ້ງຢືນສຳລັບເງິນຊ່ວຍເຫຼືອ UI ປະຈຳອາທິດ**

## ມີຢູ່ສອງວິທີການເພື່ອຂໍເອົາເງິນຜົນປະໂຫຍດ UI:

### ສະຫມັກໂດຍໃຊ້ UI ທາງອອນໄລນ໌



UI Online (ທາງອອນໄລນ໌) ແມ່ນລະບົບທີ່ປອດໄພ, ຮັບປະກັນ, ສະດວກໃນການນຳໃຊ້, ແລະ ບໍລິການໂດຍຕົນເອງ. ທ່ານສາມາດຂໍ ເອົາເງິນຜົນປະໂຫຍດ, ດຳເນີນການຮ້ອງຂໍທີ່ມີຢູ່ແລ້ວຄືນອີກ, ຮ້ອງຂໍໃຫ້ມີການຈ່າຍເງິນຜົນປະໂຫຍດປະຈຳອາທິດ, ກວດເບິ່ງສະຖານະ ພາບຄຳຮ້ອງຂໍຂອງທ່ານ, ລົງທະບຽນສຳລັບການໂອນເງິນຝາກໂດຍກົງ, ອັບເດດທີ່ຢູ່ຂອງທ່ານ ແລະ ຍັງຍື່ນຂໍອຸທອນ ທາງອອນໄລນ໌ໄດ້ອີກ. ເພື່ອຈະສະຫມັກຂໍເອົາຜົນປະໂຫຍດໂດຍການໃຊ້ UI Online (ທາງອອນໄລນ໌), ໃຫ້ເຂົ້າຫາເວັບໄຊທ໌ www.mass.gov/dua, ເລືອກເອົາ *UI Online for Claimants* ແລະປະກອບຂໍ້ມູນທີ່ຈຳເປັນເພື່ອຍື່ນ ຄຳຮ້ອງຂອງທ່ານ.

### ຂໍເງິນໂດຍໂທຫາສູນ TeleClaim



ການບໍລິການປະກັນໄພການຫວ່າງງານກໍມີໃຫ້ໂດຍທາງໂທລະສັບ. ທ່ານສາມາດຂໍເອົາເງິນຜົນປະໂຫຍດປະກັນໄພຫວ່າງງານ, ດຳເນີນການຂໍເອົາເງິນທີ່ມີຢູ່ໃນປະຈຸບັນຄືນອີກ, ໄດ້ຮັບຂໍ້ມູນທັນເວລາກ່ຽວກັບສະຖານະພາບຂອງຄຳຮ້ອງ ແລະການຈ່າຍຜົນປະໂຫຍດຂອງທ່ານ, ການແກ້ໄຂບັນຫາ, ແລະ ຈົດຊື່ເຂົ້າໃຊ້ເວັບໄຊທ໌ເພື່ອຂໍໃຫ້ໂອນເງິນໂດຍກົງ - ທັງຫມົດນີ້ ໂດຍທາງໂທລະສັບ. ເພື່ອຈະຍື່ນຄຳຮ້ອງຂໍເອົາເງິນຜົນປະໂຫຍດໂດຍທາງໂທລະສັບ, ໃຫ້ໂທຫາສູນ TeleClaim ທີ່ເບີ 1-877-626-6800 ຈາກ ລະຫັດເຂດ 351, 413, 508, 774, ແລະ 978; ຫຼື ເບີ 1-617-626-6800 ຈາກລະຫັດເຂດອື່ນໆ. ທ່ານຈະຖືກບອກໃຫ້ເອົາລະຫັດປະກັນສັງຄົມຂອງທ່ານແລະປີທີ່ທ່ານເກີດໃສ່. ຈາກນັ້ນ ທ່ານຈະໄດ້ຖືກເຊື່ອມຕໍ່ໄປຫາຕົວແທນທີ່ຈະເອົາຂໍ້ມູນຈຳເປັນເພື່ອຈະຍື່ນຄຳຮ້ອງຂອງທ່ານ.

ໃນໄລຍະເວລາມີວຽກຫຍຸ້ງທີ່ສຸດຈາກວັນຈັນຫາວັນພະຫັດ, ການໂທເພື່ອທຳການນັດໝາຍຈະຖືກປະຕິບັດໂດຍການໃຫ້ບູລິມະສິດສຳລັບຜູ້ໂທໂດຍອີງຕາມຕົວເລກສຸດທ້າຍຂອງເລກປະກັນສັງຄົມຂອງເຂົາເຈົ້າ. ນີ້ຈະຊ່ວຍຮັບປະກັນໃຫ້ທຸກຄົນ ສາມາດຜ່ານສູນ **Teleclaim** ຢ່າງທັນເວລາ. ກະລຸນາກວດເບິ່ງຕາຕະລາງ ຂ້າງຂວານີ້ກ່ອນຈະໂທຫາ:

| ຖ້າຕົວເລກສຸດທ້າຍຂອງ SSN ຂອງທ່ານແມ່ນ: | ມື້ກຳນົດໃຫ້ໂທຫາ Teleclaim ແມ່ນ: |
|---|---|
| 0, 1 | ວັນຈັນ |
| 2, 3 | ວັນອັງຄານ |
| 4, 5, 6 | ວັນພຸດ |
| 7, 8, 9 | ວັນພະຫັດ |
| ຕົວເລກສຸດທ້າຍໃດໆ | ວັນສຸກ |

ສຳຄັນ: ກົດຫມາຍລັດ Massachusetts ທົ່ວໄປ, ບົດທີ 151A, ພາກທີ 62A ກຳນົດວ່າ ໃຫ້ເອົາໃບແຈ້ງການນີ້ ສະແດງຢູ່ເວັບໄຊທ໌ທີ່ດຳເນີນການໂດຍນາຍຈ້າງ ໃນສະຖານທີ່ເບິ່ງເຫັນຢ່າງຊັດເຈນ, ບ່ອນທີ່ມັນສາມາດເຂົ້າເຖິງໄດ້ໂດຍພະນັກງານທັງຫມົດ. ມັນຕ້ອງລວມມີຊື່ ແລະທີ່ຢູ່ທາງໄປສະນີຂອງນາຍຈ້າງ ແລະ ເລກກຳນົດການມອບຫມາຍກັບນາຍຈ້າງໂດຍພະແນກການຊ່ວຍເຫຼືອ ການຫວ່າງງານ. ໂຄງການທີ່ຜູ້ຈ້າງງານໃຫ້ໂອກາດເທົ່າທຽມກັນ. ລີຍານຸເຄາະຊ່ວຍ ແລະ ການບໍລິການແມ່ນມີໃຫ້ຕາມຄຳຮ້ອງຂໍໃຫ້ບຸກຄົນທີ່ພິການ. ສຳລັບການບໍລິການພິການທາງດ້ານຫູ, ໃຫ້ໂທຫາ 711. ການຊ່ວຍເຫລືອ ແລະການບໍລິການທີ່ມານຳນີ້ແມ່ນມີໃຫ້ຕາມຄຳຮ້ອງຂໍໃຫ້ບຸກຄົນທີ່ພິການ. ສຳລັບການບໍລິການພິການທາງດ້ານຫູພິການ, ໃຫ້ໂທຫາ 711